ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ອັດຕະປື

ເລກທີ:..02..../ຈຂອປ
ອັດຕະປື, ວັນທີ:17 ມັງກອນ 2024

# ຄຳສັ່ງ
# ວ່າດ້ວຍການຢຸດຕິການຂຸດຄົ້ນແຮ່ຄຳຕົກຂ້ອນຢູ່ພາຍໃນແຂວງ ອັດຕະປື.

- ອີງຕາມ ກົດໝາຍການປົກຄອງທ້ອງຖິ່ນ(ສະບັບປັບປຸງ) ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ຂອງເຈົ້າແຂວງ, ເຈົ້າຄອງນະຄອນ.
- ອີງຕາມ ກົດໝາຍວ່າດ້ວຍແຮ່ທາດ ສະບັບປັບປຸງ ສະບັບເລກທີ 31/ສພຊ, ລົງວັນທີ 3 ພະຈິກ 2017.
- ອີງຕາມ ມະຕິກອງປະຊຸມຄົບຄະນະບໍລິຫານງານພັກແຂວງ ຄັ້ງທີ 10 ສະໄໝທີ XI.

## ເຈົ້າແຂວງອອກຄຳສັ່ງ:

1. ໃຫ້ຢຸດຕິທຸກການເຄື່ອນໄຫວທັງໝົດກ່ຽວກັບການຂຸດຄົ້ນແຮ່ຄຳຕົກຂ້ອນ ຕາມແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 642/ຫສນຍ, ລົງວັນທີ 20 ເມສາ 2023 ຈົນກ່ວາຈະມີຄຳສັ່ງໃໝ່ຈາກຂັ້ນເທິງ;
2. ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງດຳເນີນກິດຈະການຂຸດຄົ້ນແຮ່ຄຳຕົກຂ້ອນຢູ່ຕາມລຳເຊ ແລະ ຫ້ວຍຮ່ອງໃນຂອບເຂດທົ່ວແຂວງ ອັດຕະປື ໂດຍບໍ່ໄດ້ຮັບອະນຸຍາດຈາກລັດຖະບານແຫ່ງ ສປປ ລາວ ແລະ ອົງການປົກຄອງແຂວງ ອັດຕະປື, ຖ້າຫາກວ່າມີການລະເມີດໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ກະທຳຜິດຕາມແຕ່ລະກໍລະນີ;
3. ມອບໃຫ້ພະແນກພະລັງງານ ແລະ ບໍ່ແຮ່ແຂວງ ເປັນໃຈກາງໃນການປະສານງານ ສົມທົບ ກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ, ອຳນາດການປົກຄອງເມືອງ 05 ຕົວເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ດຳເນີນການກວດກາ, ສຶກສາອົບຮົມ, ຢຸດຕິ ແລະ ມີມາດຕະການເດັດຂາດ ຕໍ່ຜູ້ກະທຳຜິດ ຕາມລະບຽບກົດໝາຍ;
4. ຕໍ່ກັບພຶດຕິກຳຂອງປະຊາຊົນຈຳນວນໜຶ່ງ ທີ່ມີການລະເມີດຫຼັກການວຽກງານແຮ່ທາດ ມອບໃຫ້ສະພາປະຊາຊົນແຂວງ, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງສົມທົບກັນຮ່ວມກັນແກ້ໄຂ ແລະ ຈັດສັນອາຊີບຄົງທີ່ໃຫ້ປະຊາຊົນໃຫ້ສອດຄ່ອງກັບຈຸດພິເສດດ້ານທີ່ຕັ້ງ ແລະ ທ່າແຮງຂອງທ້ອງຖິ່ນນັ້ນ ເພື່ອບໍ່ໃຫ້ປະຊາຊົນໄປເຄື່ອນໄຫວໄປລັກລອບຂຸດຄົ້ນຊັບພະຍາກອນແຮ່ທາດ.
5. ຄຳສັ່ງສະບັບນີ້ມີຜົນສັກສິດ ແລະ ນຳໃຊ້ໄດ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ, ຖ້າຫາກມີຂໍ້ຕົກລົງ ແລະ ຄຳສັ່ງໃດໃນເມື່ອກ່ອນ ທີ່ຂັດກັບເນື້ອໃນຄຳສັ່ງສະບັບນີ້ລ້ວນແຕ່ຖືກຍົກເລີກ.

ເຈົ້າແຂວງ

ແຂວງອັດຕະປື

ພົທ ວັນທອງ ກອງມະນີ

ບ່ອນນຳສົ່ງ:

- ຫ້ອງວ່າການແຂວງ 1 ສະບັບ.
- ພາກສ່ວນທີ່ກ່ຽວຂ້ອງ, ບ່ອນລະ 1 ສະບັບ.
- ສຳເນົາ 2 ສະບັບ.